**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ປະທານປະເທດ

ເລກທີ 206 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20. 9. 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດເປົ້າໝາຍ**

**ການພັດທະນາແບບຍືນຍົງ ( ປພຍ ຫຼື SDG ) ຢູ່ ສປປ ລາວ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 67 ຂໍ້ທີ 02;
- ອີງຕາມ ໜັງສືສະເໜີຂອງ ລັດຖະບານ ສະບັບເລກທີ 87/ລບ, ລົງວັນທີ 28 ສິງຫາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1.** ແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (ປພຍ), ຊຶ່ງປະກອບມີບັນດາທ່ານດັ່ງນີ້:

1. ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ — ເປັນປະທານ.
2. ທ່ານ ລັດຖະມົນຕີກະຊວງການຕ່າງປະເທດ — ເປັນຮອງປະທານ ແລະ ຜູ້ປະຈຳການ.
3. ທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ — ເປັນຄະນະ.
4. ທ່ານ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ — ເປັນຄະນະ.
5. ທ່ານ ລັດຖະມົນຕີກະຊວງສາທາລະນະສຸກ — ເປັນຄະນະ.
6. ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ — ເປັນຄະນະ.
7. ທ່ານ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການ - ສັງຄົມ — ເປັນຄະນະ.
8. ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ — ເປັນຄະນະ.

9. ທ່ານ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ.
10. ທ່ານ ທອງຜ່ານ ສະຫວັນເພັດ, ຮອງລັດຖະມົນຕີກະຊວງການຕ່າງປະເທດ ເປັນຄະນະ.
11. ທ່ານ ປອ ກິແກ້ວ ຈັນທະບູລີ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຄະນະ.
12. ທ່ານ ປອ ພວງປາຣິສັກ ປຣະວົງວຽງຄຳ, ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ.
13. ທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງລັດຖະມົນຕີກະຊວງການເງິນ ເປັນຄະນະ.
14. ທ່ານ ສົມຈິດ ອິນທະມິດ, ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ.
15. ທ່ານ ອຸ່ນທອງ ຂາວພັນ, ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ.
16. ທ່ານ ບຸນພັນ ອິນທະຣາດ, ຮອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ.
17. ທ່ານ ປອ ສັນຕິສຸກ ສິມມາລາວົງ, ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ.
18. ທ່ານ ທອງໃສ ຊານໄຊຍະ, ຮອງລັດຖະມົນຕີກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຄະນະ.
19. ທ່ານ ພົດ ສິນທະວົງ ໄຊຍະກອນ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ.
20. ທ່ານ ຄຳມູນ ວິພົງໄຊ, ຮອງລັດຖະມົນຕີກະຊວງພາຍໃນ ເປັນຄະນະ.
21. ທ່ານ ບຸນສະຫວາດ ບຸບຜາ, ຮອງລັດຖະມົນຕີກະຊວງຍຸຕິທຳ ເປັນຄະນະ.
22. ທ່ານ ປອ ສະໃໝຈັນ ບຸບຜາ, ຫົວໜ້າສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ.
23. ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ເປັນຄະນະ.
24. ທ່ານ ນາງ ບົວຈັນ ສີຫານາດ, ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນຄະນະ.
25. ທ່ານ ວັນນາ ດວງພະຈັນ, ຮອງປະທານສູນກາງສະຫະພັນກຳມະບານລາວ ເປັນຄະນະ.
26. ທ່ານ ອາລຸນໄຊ ສູນນະລາດ, ຮອງເລຂາສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະ.

ມາດຕາ 2. ຄະນະດັ່ງກ່າວ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຊີ້ນຳລວມການປະສານງານ ແລະ ການຈັດຕັ້ງປະຕິບັດ ປພຍ ເພື່ອຮັບປະກັນໃຫ້ມີຄວາມກົມກຽວ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຂອງກະຊວງ ຂະແໜງການ ໃນແຕ່ລະໄລຍະຈົນຮອດປີ 2030 ລວມທັງການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ;
2. ຊີ້ນຳຢ່າງໃກ້ຊິດບັນດາກະຊວງຂະແໜງການ ແລະ ທ້ອງຖິ່ນ ທັງສາຍຕັ້ງ ແລະ ສາຍຂວາງ ກ່ຽວກັບການກຳນົດບູລິມະສິດ ແລະ ເຊື່ອມສານ ປພຍ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຂອງກະຊວງຂະແໜງການ ແລະ ທ້ອງຖິ່ນ ຕາມສະພາບເງື່ອນໄຂຕົວຈິງໃນແຕ່ລະໄລຍະ;
3. ລະດົມຂົນຂວາຍການສະໜັບສະໜູນຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະ ທຶນຮອນ ຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ພາກສັງຄົມພົນລະເຮືອນ ແລະ ພາກເອກະຊົນ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
4. ຄະນະຊີ້ນຳລະດັບຊາດ ຈັດກອງປະຊຸມຢ່າງໜ້ອຍສຸດ 1 ຄັ້ງຕໍ່ປີ ໂດຍທ່ານລັດຖະມົນຕີກະຊວງການຕ່າງປະເທດ, ຮອງປະທານ ແລະ ຜູ້ປະຈຳການຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດ ປພຍ ເປັນປະທານຊີ້ນຳ ແລະ ບັນຊາກອງປະຊຸມ;
5. ຄະນະຊີ້ນຳລະດັບຊາດ ຈັດກອງປະຊຸມທົບທວນຄືນ ທຸກໆ 3 ປີ ໂດຍທ່ານນາຍົກລັດຖະມົນຕີ ເປັນປະທານຊີ້ນຳ ແລະ ບັນຊາກອງປະຊຸມ;

6. ທ່ານຮອງປະທານ ແລະ ຜູ້ປະຈຳການ ມີສິດແຕ່ງຕັ້ງ ແລະ ກຳນົດໜ້າທີ່ ຂອງຄະນະວິຊາການ ແລະ ກອງເລຂາຊ່ວຍວຽກ ຕາມການສະເໜີຂອງກະຊວງຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 3. ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງໃນທົ່ວປະເທດ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ລັດຖະດຳລັດ ສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 4. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ